ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 3332 /ທຄຕລ .2022.........

ນະຄອນຫຼວງວຽງຈັນ, ວັນທີ: 12 DEC 2022

# ໜັງສືແຈ້ງເຊີນ

**ເຖິງ:** ບໍລິສັດ ບໍລິການສິ່ງພິມ ແລະ ບັນດາໂຮງພິມ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນສິ່ງພິມ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ຜະລິດ ສິ່ງພິມ ເພື່ອນຳໃຊ້ ເຂົ້າໃນວຽກງານ ຂອງ ທຄຕລ ລາຍລະອຽດສິນຄ້າ ມີດັ່ງຕາຕະລາງລຸ່ມນີ້:

| ລາຍການ | ຮູບປະກອບ | ລາຍລະອຽດ |
|---|---|---|
| 1. ຊອງເຫຼືອງ A5 ຈຳນວນ 18.000 ຊອງ |  | - ຊອງເຫຼືອງ A5 ຂະໜາດ 10" * 7"<br>- ພິມ 04 ສີ 01 ໜ້າ<br>- ການຫຸ້ມຫໍ່: (50 ຊອງ/ແພັກ, 10 ແພັກ/ແກັດ), ພ້ອມລະບຸລາຍອຽດທັງຈຳນວນ ແລະ ສິນຄ້າໃສ່ແຕ່ລະແກັດ ພ້ອມຕິດຕົວຢ່າງ, ສິນຄ້າ ຮັບປະກັນ 01 ປີ. |
| 2. ຊອງເຫຼືອງກາງ A4 ຈຳນວນ 100.000 ຊອງ |  | -ຊອງເຫຼືອງກາງ A4 ຂະໜາດ 09"*12".3/4<br>- ພິມ 04 ສີ 01 ໜ້າ<br>- ການຫຸ້ມຫໍ່: (50 ຊອງ/ແພັກ, 10 ແພັກ/ແກັດ), ພ້ອມລະບຸລາຍອຽດທັງຈຳນວນ ແລະ ສິນຄ້າໃສ່ແຕ່ລະແກັດ ພ້ອມຕິດຕົວຢ່າງ, ສິນຄ້າ ຮັບປະກັນ 01 ປີ. |
| 3. ຊອງຂາວຍາວ BCEL ຈຳນວນ 15.000 ຊອງ |  | - ຊອງຂາວຍາວ, 23,5*11 ຊມ, ພິມ 4 ສີ 1 ໜ້າ<br>- ການຫຸ້ມຫໍ່: 50 ຊອງ/ແພັກ, 10 ແພັກ/ແກັດ ພ້ອມລະບຸລາຍລະອຽດ ໃສ່ແຕ່ລະແພັກ, ສິນຄ້າ ຮັບປະກັນ 01 ປີ. |
| 4. ໃບມອບເງິນສົດ 3P ຈຳນວນ 2.000 ຫໍ່ |  | - ໃບມອບເງິນສົດ 3P: ຂະໜາດ 16 x 18.8 cm, ໃຊ້ເຈ້ຍເຄມີ 03 ໃບ/ຊຸດ, (ເຈ້ຍຍີ່ຫໍ້ OJI ເກດ A), ພິມ 04 ສີ, ໃຊ້ກາວແຍກຊຸດ.<br>- ການຫຸ້ມຫໍ່: 500 ຊຸດ/ຫໍ່, 05 ຫໍ່/01 ແພັກ ແລະ ຕິດຕົວຢ່າງໃສ່ທຸກຫໍ່ ພ້ອມລະບຸລາຍອຽດຂອງສິນຄ້າ, ສິນຄ້າ ຮັບປະກັນ 01 ປີ. |
| 5. ເຊືອກແດງມັດເງິນ ຈຳນວນ 500 ກໍ້ |  | - ເຊືອກສີແດງມັດເງິນ, ກວ້າງ 9 ມມ *ໜາ*0,9 ມມ, ພິມໜັງສື (BCEL) ສີຂາວ, ໜັກ 08 ກລ/ກໍ້, ຍາວ: 1.500 ມ, ແກນໄດ້ມາດຕະຖານ ທຄຕລ, ການຫຸ້ມຫໍ່: 02ກໍ້/ແພັກ ແລະ ລະບຸລາຍລະອຽດສິນຄ້າ ແລະ ຈຳນວນ, ສິນຄ້າ ຮັບປະກັນ 01 ປີ. |



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

| | | |
|---|---|---|
| 6. ເຈ້ຍບິນ ATM ຈຳນວນ 500 ກໍ້. |  | - ກໍ້ເຈ້ຍໃບບິນ ATM, ຂະໜາດ 80*180 ມມ, ເຈ້ຍເທີມໍ 58 gsm, ພິມ 4 ສີ, ແກນຮອບໃນ 2,7 ຊມ, ແກນຮອບນອກ 3,1 ຊມ, ການຫຸ້ມຫໍ່: 8 ກໍ້/ແກັດ, ລະບຸລາຍລະອຽດສິນຄ້າ ແລະ ຈຳນວນ ໃສ່ແຕ່ລະແກັດ, ສິນຄ້າຮັບປະກັນ 01 ປີ. |
| 7. ເຈ້ຍກົດບັດຄິວກໍ້ນ້ອຍ ຈຳນວນ 2.000 ກໍ້ |  | -ເຈ້ຍກົດບັດຄິວກໍ້ນ້ອຍ ຂະໜາດ ກວ້າງ 80 ມມ, ຜ່າສູນກາງ 80 ມມ, ແກນຮອບນອກ 17 ມມ, ແກນຮອບໃນ 15 ມມ, ເຈ້ຍເທີມໍ 70 gsm. ການຫຸ້ມຫໍ່: 02ກໍ້ຕໍ່ແພັກ, 25 ແພັກຕໍ່ແກັດ (ແພັກດ້ວຍຖົງຢາງກັນແສງ), ລະບຸລາຍລະອຽດສິນຄ້າ ແລະ ຈຳນວນ ຕິດໃສ່ແກັດ |
| ໝາຍເຫດ:<br>1. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກເປັນແຕ່ລະລາຍການ, ຄັດເລືອກຈາກຫຼາຍເງື່ອນໄຂ, ບໍ່ໄດ້ພິຈາລະນາພຽງແຕ່ມູນຄ່າຢ່າງດຽວ.<br>2. ສາມາດມາເບິ່ງຕົວຢ່າງສິນຄ້າ/ສິ່ງພິມ ໄດ້ ທີ່ ພະແນກຫ້ອງການບໍລິຫານ-ການເງິນ, ສຳນັກງານໃຫຍ່ ທຄຕລ, ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C. | | |

❖ **ເງື່ອນໄຂຂອງບໍລິສັດ, ໂຮງພິມພາກລັດ ແລະ ເອກະຊົນ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

➢ **ເອກະສານ ຊອງທີ 01:**

1. ປະກອບເອກະສານໃນນາມນິຕິບຸກຄົນ, ດຳເນີນທຸລະກິດ ຢ່າງໜ້ອຍ 02 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2021 ແລະ ຮ່າງແບບຟອມຂອງ ທຄຕລ ທີ່ຄັດຕິດມາພ້ອມນີ້ + ສິນຄ້າຕົວຢ່າງ ຢ່າງລະ 1-2 ອັນ.
2. ກຳນົດຍື່ນລາຍລະອຽດຂ້າງເທິງ ສາມາດຍື່ນໄດ້ນັບຈາກ ວັນນີ້ ເຖິງ ວັນສຸກ ວັນທີ 16/12/2022 ກ່ອນເວລາ 11:00 ໂມງ ໂດຍການສົ່ງຟາຍສະແກນເປັນ PDF ເຂົ້າມາທີ່ E-mail: procurement-@bcel.com.la

➢ **ເອກະສານ ຊອງທີ 02 (ປິດຊອງ):**

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມ ໃນວັນພຸດ, ທີ 21/12/2022 ເວລາ 13:30 ໂມງ ທີ່ ຊັ້ນ 05, ອາຄານ C.
2. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ ພ້ອມທັງລະບຸມື້ໝົດກຳນົດເວລາໃນໃບສະເໜີລາຄາດັ່ງກ່າວພ້ອມ (Expire date) ຢ່າງໜ້ອຍ 20 ວັນລັດຖະການ.

**<u>ໝາຍເຫດ</u>:**

1. ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.
2. ການຊຳລະແມ່ນ ຈ່າຍເງິນ ຕາມມູນຄ່າສັ່ງຊື້ແຕ່ລະລາຍການ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນໄລຍະ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຜູ້ມີຄວາມສົນໃຈ ຍື່ນຊອງເຂົ້າຮ່ວມການປະມູນລາຄາໃນຄັ້ງນີ້ດ້ວຍ.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

**ສາຍສະໝອນ ຈັນທະຈັກ**

ເບີໂທປະສານງານ: 021 213 200-414

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | | ພາຍໃນຫຼືຕ່າງປະເທດ | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: